# DEPARTMENT OF DEVELOPMENTAL SERVICES

1600 NINTH STREET, Room 320, MS 3-8
SACRAMENTO, CA 95814
TTY (916) 654-2054 (ສໍາລັບຜູ້ມີບັນຫາດ້ານການຟັງ)
(916) 654-1954

ວັນທີ 4 ພະຈິກ 2019

ເຖິງ: ຫົວໜ້າຜູ້ບໍລິຫານສູນພາກພື້ນ

ຫົວຂໍ້: ການກວດກາປະຫວັດຜູ້ໃຫ້ບໍລິການ ການຕັດສິນໃຈດ້ວຍຕົນເອງ

ຈຸດປະສົງຂອງໜັງສືສະບັບນີ້ແມ່ນເພື່ອລະບຸຕົວຕົນ ບັນດາຜູ້ໃຫ້ບໍລິການ ແລະ ສະໜັບສະໜູນ ຜູ້ທີ່ໄດ້ຮັບ ການກວດສອບ ປະຫວັດອາຊະຍາກໍາ ເພື່ອສະໜອງການບໍລິການສໍາລັບ ຜູ້ຊົມໃຊ້ ໃນ ໂປຼແກຣມການຕັດສິນໃຈດ້ວຍຕົນເອງ [ປະມວນກົດໝາຍ ສະຫວັດດີການ ແລະ ສະຖາບັນ (Welfare and Institutions, W&I)
§4685.8(w)]. ໜັງສືສະບັບນີ້, ພ້ອມກັບຂໍ້ມູນເພີ່ມເຕີມລຸ່ມນີ້ ກ່ຽວກັບ ຂະບວນການກວດກາປະຫວັດ, ແທນທີ່ວັນທີ 24 ກັນຍາ 2015, ບັນທຶກຕໍ່ກັບຫົວຂໍ້ນີ້.

ບຸກຄົນຕໍ່ໄປນີ້ແມ່ນຈໍາເປັນຕ້ອງຮັບການກວດກາປະຫວັດອາຊະຍາກໍາ:

- ຜູ້ໃຫ້ບໍລິການທີ່ສະໜອງ ການບໍລິການດູແລ ສ່ວນຕົວໂດຍກົງ (ຊ່ວຍເຫລືອໃນການນຸ່ງເຄື່ອງ, ແຕ່ງຕົວ, ອາບນໍ້າ ຫລື ການບໍລິການດ້ານອະນາໄມສ່ວນຕົວ); ແລະ
- ຜູ້ໃຫ້ການບໍລິການອື່ນໆໃດໜຶ່ງ ສໍາລັບ ຜູ້ທີ່ການກວດກາປະຫວັດອາຊະຍາກໍາ ຖືກຮຽກຮ້ອງໂດຍ ຜູ້ເຂົ້າຮ່ວມ ຫລື ການບໍລິການການຈັດການການເງິນຂອງ ຜູ້ເຂົ້າຮ່ວມ.

ປະມວນກົດໝາຍ W&I §4685.8(w) ສັງເກດວ່າ ການກວດກາປະຫວັດ ສໍາລັບ ໂປຼແກຣມການຕັດສິນໃຈດ້ວຍຕົນເອງ ຈະຖືກຈັດການໂດຍສອດຄ່ອງກັບ ຂັ້ນຕອນທີ່ລະບຸໃນ ປະມວນກົດໝາຍ W&I
§4689.2 ຫາ 4689.6 ທີ່ບັງຄັບໃຊ້ກັບ ສ□ານັກງານທີ່ຮັບຜິດຊອບວຽກງານໃນເຮືອນແລະຄອບຄົວ (FHA). ໝວດ 4689.2 ລະບຸວ່າ ປະຫວັດການທາງອາຊະຍກໍາທີ່ສົມບູນຕ້ອງຮັບຈາກ ກະຊວງຍຸຕິທໍາ ແລະ ຫາກກ່ຽວຂ້ອງ, ສໍານັກງານສືບສວນຂອງສະຫະລັດ (FBI). ສອດຄ່ອງກັບຂະບວນການການກວດກາປະຫວັດສໍາລັບ FHAs, ຂໍ້ມູນຈາກ FBI ຕ້ອງໄດ້ຮັບສໍາລັບ ບຸກຄົນທີ່ບໍ່ໄດ້ພັກອາໄສຢູ່ໃນ California ຢ່າງຕໍ່ເນື່ອງຢ່າງຕໍ່າສອງປີ [ເບິ່ງ ມາດຕາ 17, ຂອງກົດໝາຍແຫ່ງລັດ California (California Code of Regulations) §56085(b)].

ຜູ້ໃຫ້ບໍລິການ ການຈັດການດ້ານການເງິນຂອງຜູ້ເຂົ້າຮ່ວມຈະຊ່ວຍເຫລືອໃຫ້ການບໍລິການທີ່ກ່ຽວຂ້ອງໃນຂະບວນການນີ້ໂດຍ ການແນະນໍາພວກເຂົາໄປທີ່ ສະຖານທີ່ທີ່ເໝາະສົມ ບ່ອນທີ່ສາມາດເກັບ ລາຍນິ້ວມື. ຕາມທີ່ໄດ້ແຈ້ງເຕືອນ, ຄ່າໃຊ້ຈ່າຍສໍາລັບ ລາຍນິ້ວມື ແມ່ນ ຜູ້ໃຫ້ບໍລິການຈະຮັບຜິດຊອບ.

ຖ້າມີຄໍາຖາມກ່ຽວກັບ ຂໍ້ຮຽກຮ້ອງການກວດກາປະຫວັດອາຊະຍາກໍາ, ກະລຸນາອີເມວຫາ sdpbackground@dds.ca.gov.

ດ້ວຍຄວາມນັບຖື,

*ຕົ້ນສະບັບໄດ້ເຊັນໂດຍ:*

JIM KNIGHT
ຮອງຫົວໜ້າ
ພະແນກໂປຼແກຼມແຫ່ງລັດຖະບານກາງ (Federal Programs Division)

cc: ຜູ້ຄຸ້ມຄອງສູນພາກພື້ນ ຫົວໜ້າຜູ້ໃຫ້ຄໍາປຶກສາ ສູນພາກພື້ນ
ການບໍລິການຊຸມຊົນ ສູນພາກພື້ນ ຫົວໜ້າ ກຸ່ມສໍານັກງານ ສູນພາກພື້ນ
ສະພາແຫ່ງລັດຕໍ່ກັບ ສິດທິຜູ້ພິການທາງການຈະເລີນເຕີບໂຕແຫ່ງ California
ກຸ່ມແນະນໍາ ໂປຼແກຣມການຕັດສິນໃຈດ້ວຍຕົນເອງ